# ການອອກແບບຕົວອັກສອນລາວ ໑

ຕາມປົກກະຕິແລ້ວ ການຂຽນປະໂຍກຕ່າງໆໃນພາສາລາວກັບພາສາໄທຍ໌ ເພິ່ນບໍ່ໃຊ້ ຈຸດຈ້ຳເມັດຫລືເຄື່ອງຫມາຍອື່ນໆແຕ່ປະການໃດໆ ເພິ່ນແຍກປະໂຍກຕ່າງໆອອກຈາກກັນດ້ວຍການຍະວ່າງເທົ່ານັ້ນ ແຕ່ບາງຄັ້ງບາງຄາວ ເຮົາກໍຕ້ອງການໃຊ້ເຄື່ອງຫມາຍເຫລົ່ານີ້ ເຫມືອນກັນ [Ponctuation] ເຊັ່ນວ່າ ການຂຽນຈຳນວນເລກ ການຂຽນວັຈນານຸກົມແລະການຂຽນສິ່ງອື່ນໆທາງດ້ານວິທຍາສາດເປັນຕົ້ນ ສະນັ້ນ ເຖິງແມ່ນວ່າ ຈະບໍ່ມີການໃຊ້ເຄື່ອງຫມາຍດັ່ງກ່າວນີ້ກໍຈິງ ການອອກແບບຕົວອັກສອນລາວແຕ່ລະແບບຫລືວ່າການອອກແບບແມ່ພິມລາວແຕ່ລະຢ່າງນັ້ນ ນັກອອກແບບທຸກຄົນ [Designer] ຈຳເປັນຈະຕ້ອງກຳນົດເອົາເຄື່ອງຫມາຍເຫລົ່ານີ້ ເຂົ້າໃສ່ໃນຮ່າງຂອງແມ່ພິມ ຫລື ເຂົ້າໃສ່ໃນຈຳນວນອັກສອນ ທີ່ຕົນຈະສ້າງມັນຂຶ້ນມານັ້ນຢູ່ສເມີ ທັງນີ້ກໍເພື່ອໃຫ້ຂນາດສ່ວນຂອງຈຳພວກຕົວອັກສອນທັງຫລາຍເຂົ້າເຫມາະສົມກັນດີນັ້ນເອງ

ອີກປະການນຶ່ງ ການອອກແບບແມ່ພິມລາວແຕ່ລະຢ່າງນັ້ນ ມີຄວາມຫຍຸ້ງຍາກລຳບາກຫລາຍ ເພາະວ່າ ຫນັງສືລາວແຕ່ລະຕົວ ມີຫົວຂອດ ແລະ ເຕັມໄປດ້ວຍການຂີດໆງໍໆ ຫລື "ຄວາມຄົດລ້ຽວ" ຫລາຍໂພດ ສອງມາ ການສະກົດຫນັງສືລາວມີຢູ່ດ້ວຍກັນສີ່ຖ້ານ ຄື

- ຖ້ານ ໑ ຄື ຂຽນຕາມແຖວ(ລອຍ) (ligne horizontale mais sur la base de la ligne) ຕົວຢ່າງ ◌ຫ◌
- ຖ້ານ ໒ ຄື ຂຽນຕາມແຖວຈິ້ມ (ligne verticale) ຊຶ່ງມີຢູ່ສອງຢ່າງດ້ວຍກັນ ເຊັ່ນ ພາກສ່ວນທີ່ຢູ່ຂ້າງລຸ່ມມີ ◌ຼ ◌ູ ◌ຸ ແລະ
- ພາກສ່ວນທີ່ຢູ່ຂ້າງເທິງມີ ◌່ ◌້ ◌໊ ◌໋ ◌໌ ◌ໍ ◌ັ ◌ົ ◌ິ ◌ີ ◌ຶ ◌ື ຈຳພວກເຫລົ່ານີ້ເປັນຈຳພວກທີ່ບັນຈຸຢູ່ໃນຖ້ານ ໓ ແລະເສີມດ້ວຍ
- ຖ້ານ ໔ ຄື ຈຳພວກວັນນະຍຸດ ອັນມີ ◌່ ◌້ ◌໊ ◌໋ (◌໌) ທີ່ໃຊ້ໄວ້ຂຽນເທິງຫົວຂອງ ◌ິ ◌ີ ◌ຶ ◌ື ◌ັ ◌ົ ◌ໍ ດັ່ງນີ້ເປັນຕົ້ນ
- ຖ້ານ ໕ ຕົກຢູ່ໃນກໍຣະນີພິເສດ ຕົວຢ່າງວ່າເຮົາຢາກຂຽນ "ຫລຸດ" ເຮົາມີສິດຂຽນ ຕົວ ◌ຫ◌ ແລະຕົວ ◌ຼ ແລະຕົວ ◌ຸ ແລະຕົວ ◌ດ◌ ເພາະວ່າເພິ່ນບໍ່ເຄີຍມີກົດຣະບຽບສຳລັບກໍຣະນີນີ້ຈັກເທື່ອ ອັນຫມາຍຄວາມວ່າ ການສະກົດຫນັງສືລາວ ສາມາດມີໄດ້ ໕ ຊັ້ນ ຫລື ໕ ຖ້ານນັ້ນເອງ ແຕ່ໃນພາກປະຕິບັດແລ້ວມີພຽງແຕ່ ໔ ຖ້ານເທົ່ານັ້ນ

ໃນເມື່ອເປັນດັ່ງນີ້ ແຖວແຕ່ລະແຖວ ກໍຕ້ອງຫ່າງໄກກັນສເມີ ອັນພາໃຫ້ຂາດຄວາມ

# ການອອກແບບຕົວອັກສອນລາວ ໑

ສວຍງາມເປັນຂອງທັມມະດາ ດ້ວຍເຫດນີ້ ທ່ານຈະສັງເກດເຫັນໄດ້ວ່າ ນັກອອກແບບແຕ່ລະຄົນ ຈະເປັນຄົນລາວຫລືຄົນຊາດອື່ນໆກໍຕາມ ຂະເຈົ້າຈະພາກັນຂີດຫາງຕົວ ◌ຽ◌ ຂຶ້ນຫລື ແຜງຫາງຕົວ ◌ຽ◌ ໃຫ້ໄປເປັນແບບໃຫມ່ ເພື່ອຫລີກການໄປໂຄມກັບສຣະ ◌ຸ ◌ູ ນັ້ນເອງ ແລະ ເພື່ອເວັ້ນການໄປໂຄມເອົາກັບຫາງຂອງ ◌ຽ◌ ແລະຕົວອື່ນໆທີ່ມີຫາງດັກລົງລຸ່ມ ແລະ ລັກສນະການແຕ້ມຕົວ ຽ◌ ນີ້ກໍຕົກຢູ່ໃນທໍານອງດຽວກັນນັ້ນເອງ ໂດຍທີ່ບໍ່ໄດ້ກ່າວໄປເຖິງຕົວອື່ນໆທີ່ມີບັນຫາແບບດຽວກັນ ນອກຈາກການຄິດໂຄ້ງຂອງອັກສອນແຕ່ລະຕົວນັ້ນເອງ

ບັດນີ້ ຍັງເຫລືອຈໍາພວກ ◌ິ ◌ີ ◌ຶ ◌ື ◌່ ◌້ ◌໊ ◌໋ ◌ໍ ◌໌ ◌ັ ◌ົ ທີ່ໄປໂຄມເອົາຫາງຂອງຕົວ ◌ປ◌ ◌ຝ◌ ◌ຢ◌ ◌ຟ◌ (ຝີ ຟັ້ງ ຟື້ນ) ແລະ ຈໍາພວກວັນນະຍຸດທີ່ໄປໂຄມກັບຫົວຂອງສຣະ ◌ິ ◌ີ ◌ຶ ◌ື ◌ັ ◌ົ (◌ໍ) ໃນເມື່ອເຮົາຜະສົມສຣະດັ່ງກ່າວນີ້ກັບຈໍາພວກວັນນະຍຸດ ດ້ວຍເຫດນີ້ ຂ້າພະເຈົ້າຈຶ່ງເຂົ້າໃຈວ່າ ຄົນໄທຍ໌ເຄີຍພິມຫນັງສືຫລາຍກວ່າຄົນລາວແລະການພິມຫນັງສືໃນສໄມກ່ອນນັ້ນ  ເພິ່ນຕ້ອງຜລິດຫລືຫລໍ່ແມ່ພິມເອົາເອງເພິ່ນຈຶ່ງຮູ້ຈັກດັດແປງຕົວອັກສອນໄປໄວກ່ອນຄົນລາວ ທັງໆທີ່ຄົນໃນສອງປະເທດນີ້ ເຄີຍມີການຂີດຂຽນແບບດຽວກັນມາກ່ອນແລ້ວ

ດັ່ງທີ່ໄດ້ກ່າວມາຂ້າງເທິງນີ້ ຄົນໄທຍ໌ຈຶ່ງຕັດຫົວຂອງອັກສອນຈໍາພວກນີ້ອອກ ປະມານ ໑/໔ (◌ິ ◌ີ ◌ຶ ◌ື) ແຕ່ຖ້າຫາກວ່າ  ເຮົາອອກແບບອັກສອນລາວ ໂດຍບໍ່ໃຫ້ມີຫົວຂອດຫລືໂດຍບໍ່ຂອດຫົວຂອງມັນ ຄວາມຫຍຸ້ງຍາກກໍຜ່ອນລົງຫລາຍເຕີບ ແລະຖ້າເຮົາລົງມືທົດລອງອອກແບບອັກສອນລາວດ້ວຍຕົນເອງ ເຮົາຈະເຂົ້າໃຈບັນຫາດັ່ງກ່າວ ໃນທັນທີທັນໃດໂລດ

ຕົວຢ່າງແມ່ພິມທີ່ທ່ານ ດຣ. ສົມອົກ ນໍາມາໃຊ້ນີ້ ເປັນການສະແດງເຖິງຄວາມສລາດໃນການອອກແບບຫນັງສືລາວອີກແບບນຶ່ງ ຊຶ່ງ ຂ້າພະເຈົ້າ ຂໍສະແດງຄວາມໂຄຣົບມາຍັງນັກອອກແບບຜູ່ນີ້ເປັນພິເສດ ເຖິງແມ່ນວ່າ ຍັງມີຫລາຍອັນທີ່ຍັງບໍ່ເຂົ້າຮູບຮອຍຢູ່ກໍດີ ເຮົາຄວນນໍາເອົາບາງສິ່ງບາງຢ່າງໃນຈໍາພວກອັກສອນເຫລົ່ານີ້ ນໍາມາດັດແປງ ຫລື ນໍາມາໃຊ້

ແດ່ນັກອອກແບບແມ່ພິມລາວທຸກຄົນ

ຄໍາແພວ ພູເພັຊຣ໌ລິນທອງ

ເມື່ອວັນທີ ໓໐-໐໔-໒໐໐໗ ເດືອນເມສາ ພ.ສ. ໒໕໕໐ ແຫ່ງເມືອງປາຣີສ໌ ທີ່ປະເທດຝຣັ່ງ